*(ຂໍ້ຕົກລົງກ່ຽວກັບການປ່ອຍແລະການຊົດເຊີຍຄວາມເສັຽຫາຍ - ຕໍ່) :*

| ຂໍ້ມູນສຳລັບຜູ້ເຂົ້າຮ່ວມ | | | |
|---|---|---|---|
| ຊື່ (ຊື່ແລະຊື່ກາງ): | ວັນເດືອນປີເກີດ: | ເລກໂທຣະສັບ: | |
| ທີ່ຢູ່ຖະໜົນ: | ເລກຫ້ອງ #: | ເມືອງ: | ຣັຖ: |
| ອາຊີບ: | | | |
| ເຫດຜົນສຳລັບ, ຫລືຈຸດປະສົງຂອງການຂີ່ຣົຖ: | | | |
| | | | |
| ລາຍເຊັນຂອງຜູ້ເຂົ້າຮ່ວມ: | | | ວັນທີ: |

| ຖ້າຫາກຜູ້ເຂົ້າຮ່ວມອາຍຸຕ່ຳກວ່າ 18 ປີ; ພໍ່ແມ່/ຜູ້ປົກຄອງຕາມກົດໝາຍຕ້ອງປະກອບພາກສ່ວນຂ້າງລຸ່ມນີ້ໃຫ້ຄົບຖ້ວນ. | | | |
|---|---|---|---|
| ຊື່ (ນາມສະກຸນ, ຊື່ແລະຊື່ກາງ): | ວັນເດືອນປີເກີດ: | ເລກໂທຣະສັບ: | |
| ທີ່ຢູ່ຖະໜົນ: | ເລກຫ້ອງ #: | ເມືອງ: | ຣັຖ: |
| ອາຊີບ: | | | |
| ລາຍເຊັນອະນຸມັດຂອງ<br>ພໍ່ແມ່/ຜູ້ປົກຄອງ | | | ວັນທີ: |

| | |
|---|---|
| ຊື່ໂຄງການ MPD -ຫລື- ຖ້າວ່າຍົກເວັ້ນ, ລາຍເຊັນຂອງຫົວໜ້າ/ຕຳຫລວດທາງຫລວງ DC ຫລືຕົວແທນທີ່ໄດ້ຮັບອະນຸຍາດ: | |
| ລາຍເຊັນອະນຸມັດຂອງຜູ້ຄວບຄຸມຂອງໂຄງການ MPD (ລວມເຖິງການອະນຸຍາດທີ່ພິສູດໄດ້ຂອງພໍ່ແມ່/ຜູ້ປົກຄອງ): | ເລກພະນັກງານ: |
| ລາຍເຊັນຂອງພະຍານ MPD (ນອກເໜືອຈາກລາຍເຊັນຂ້າງເທິງນີ້): | ເລກພະນັກງານ: |

| ການທົບທວນແລະການອະນຸຍາດຂອງ MPD | | | | |
|---|---|---|---|---|
| ຢູ່ທີ່ນີ້ ການອະນຸຍາດໄດ້ຖືກ ☐ ອະນຸມັດ ☐ ປະຕິເສດ ແກ່ບຸກຄົນທີ່ມີຊື່ຢູ່ທີ່ນີ້, ແລະລາຍເຊັນຂອງເຂົາກໍ່ຢູ່ຂ້າງເທິງນີ້, ຫລື ຖ້າວ່າເປັນເດັກອາຍຸຕ່ຳກວ່າ 18 ປີ, ກໍ່ມີລາຍເຊັນຂອງພໍ່ແມ່ຫລືຜູ້ປົກຄອງ, ໃຫ້ເປັນຜູ້ໂດຍສານໃນຣົຖຂອງຕຳຫລວດພ້ອມກັບ ________________________ເຂດປົກຄອງ/ພະແນກ/ໜ່ວຍ, ໃນວັນທີ ________ເດືອນ_________________________20 ______, ນັບແຕ່ເວລາ ____________________ໂມງ, ເຖິງ_____________________ໂມງໃນວັນທີ _____________________ເດືອນ____________________20___________. | | | | |
| ລາຍເຊັນຂອງຫົວໜ້າ MPD (ລວມເຖິງການທົບທວນແລະການອະນຸຍາດ): | ວັນທີ: | ລະດັບ ຕຳແໜ່ງ: | ຕຳແໜ່ງ ຫລືໜ້າທີ່ທີ່ໄດ້ຮັບມອບໝາຍ: | ເລກພະນັກງານ: |

| ການຍອມຮັບໂດຍຄວາມສະໝັກໃຈຂອງຜູ້ເຂົ້າຮ່ວມທີ່ໂດຍສານມານຳ | | | |
|---|---|---|---|
| ຢູ່ທີ່ນີ້ ຂ້າພະເຈົ້າ/ພວກເຮົາຊຶ່ງລົງລາຍເຊັນຂ້າງລຸ່ມນີ້ ຍອມຮັບວ່າເປັນຜູ້ເຂົ້າຮ່ວມໃນໂຄງການການໂດຍສານໃນຣົຖຕຳຫລວດ (Ride-Along Program) ທີ່ບຸກຄົນໄດ້ບັນຍາຍໄວ້ໃນທີ່ນີ້. | | | |
| ລາຍເຊັນ: | ເລກພະນັກງານ | ລາຍເຊັນ: | ເລກພະນັກງານ: |
| ວັນທີ: | ການມອບໝາຍສຳລັບກຸ່ມ | ຫລືເລກຣົຖ: | |

| ໝາຍເຫດຂອງ MPD: |
|---|
| |
| |

*ຟອມນີ້ຕ້ອງໄດ້ຖືກເກັບມ້ຽນໄວ້ທີ່ກົມຕຳຫລວດເມືອງມິນນີອາໂປລິສ ແລະຍື່ນໂດຍສອດຄ່ອງກັບນະໂຍບາຍຂອງກົມ.*

# ໂຄງການການໂດຍສານໃນຣົຖຕຳຫລວດ (RIDE-ALONG PROGRAM)

ຍິນດີຕ້ອນຮັບສູ່ໂຄງການການໂດຍສານໃນຣົຖຕຳຫລວດແຫ່ງກົມຕຳຫລວດເມືອງມິນນີອາໂປລິສ (Minneapolis Police Department's Ride-Along Program). ຜູ້ເຂົ້າຮ່ວມໂຄງການທຸກຄົນຕ້ອງອ່ານແລະເຊັນຊື່ໃສ່ໃນຟອມຂໍ້ຕົກລົງວ່າດ້ວຍການປ່ອຍແລະການຊົດເຊີຍຄວາມເສັຽຫາກ່ອນທີ່ຈະໂດຍສານໃນຣົຖຕຳຫລວດ.

## ຂໍ້ຕົກລົງວ່າດ້ວຍການປ່ອຍແລະການຊົດເຊີຍຄວາມເສັຽຫາຍ

ເນື່ອງຈາກວ່າ, ຜູ້ເຂົ້າຮ່ວມທີ່ເຊັນຊື່ໃນທີ່ນີ້, ຫລືພໍ່ແມ່ຫລືຜູ້ປົກຄອງຕາມກົດໝາຍໃນນາມຂອງບຸກຄົນທີ່ອາຍຸຕ່ຳກວ່າສິບແປດ (18) ປີ ໄດ້ເລືອກທີ່ຈະຂີ່ຫລືໂດຍສານໃນຖານະເປັນຜູ້ໂດຍສານໃນຣົຖຂອງກົມຕຳຫລວດຂອງເມືອງມິນນີອາໂປລິສ, ເຮັນນີພິນ ຄາວຕີ້, ຣັຖມິນນີໂຊຕ້າ ໂດຍຄວາມສະໝັກໃຈ, ແລະໂດຍສານໄປກັບເຈົ້າໜ້າທີ່ຕຳຫລວດຂອງເມືອງດັ່ງກ່າວໃນຂະນະທີ່ມີການປະຕິບັດໜ້າທີ່ຂອງຕຳຫລວດ, ເພື່ອສຶກສາແລະສັງເກດເພື່ອໃຫ້ເກີດປະໂຫຍດແກ່ຕົນເອງ ກ່ຽວກັບໜ້າທີ່ແລະການເຮັດວຽກຂອງເຈົ້າໜ້າທີ່ຂອງກົມຕຳຫລວດເມືອງມິນນີອາໂປລິສ; ແລະ

ເນື່ອງຈາກວ່າ, ກົມຕຳຫລວດເມືອງມິນນີອາໂປລິສ ເຊື່ອວ່າ ມັນຈະເປັນປະໂຫຍດແກ່ບຸກຄົນທີ່ອາຍຸຕ່ຳກວ່າສິບແປດ (18) ປີ ທີ່ຈະເຂົ້າຮ່ວມໃນໂຄງການ ການໂດຍສານໃນຣົຖຕຳຫລວດ ໃນຖານະເປັນພາກສ່ວນໜຶ່ງຂອງໂຄງການເຍົາວະຊົນທີ່ໄດ້ຮັບອະນຸມັດຂອງພະແນກ ພ້ອມດ້ວຍການອະນຸມັດຂອງພໍ່ແມ່ ຫລືຜູ້ປົກຄອງຕາມກົດໝາຍ; ແລະ

ເນື່ອງຈາກວ່າ, ກົມຕຳຫລວດເມືອງມິນນີອາໂປລິສ ແລະອີກຝ່າຍໜຶ່ງທີ່ຢູ່ໃນຂໍ້ຕົກລົງນີ້ ເຂົ້າໃຈວ່າ ໃນລະຫວ່າງການໂດຍສານໃນຣົຖຕຳຫລວດ, ເຈົ້າໜ້າທີ່ຂອງກົມອາດຕ້ອງຕອບຮັບຕໍ່ສະຖານະການສຸກເສີນທີ່ຮຽກຮ້ອງໃຫ້ມີການປະຕິບັດໜ້າທີ່ຂອງຕຳຫລວດ ຊຶ່ງອາດເຮັດໃຫ້ຜູ້ເຂົ້າຮ່ວມທີ່ໂດຍສານມານຳຕົກຢູ່ໃນພາວະສ່ຽງຕໍ່ການຖືກບາດເຈັບ; ແລະ

ເນື່ອງຈາກວ່າ, ຜູ້ເຂົ້າຮ່ວມການໂດຍສານນັ້ນ, ຫລືພໍ່ແມ່ ຫລືຜູ້ປົກຄອງຕາມກົດໝາຍຂອງຜູ້ເຂົ້າຮ່ວມທີ່ອາຍຸຕ່ຳກວ່າ 18 ປີ, ເຂົ້າໃຈເຖິງ ພາວະຄວາມສ່ຽງທີ່ມີຢູ່ຈິງ, ເຖິງແມ່ນວ່າ ເຈົ້າໜ້າທີ່ຂອງກົມຈະພະຍາຍາມຫລຸດຜ່ອນຄວາມສ່ຽງດັ່ງກ່າວທີ່ຈະເກີດຂຶ້ນກັບຜູ້ເຂົ້າຮ່ວມໃຫ້ຫລາຍທີ່ສຸດກໍ່ຕາມ; ແລະ

ເນື່ອງຈາກວ່າ, ຜູ້ເຂົ້າຮ່ວມທີ່ເຊັນຊື່ໃນທີ່ນີ້, ຫລືພໍ່ແມ່ ຫລືຜູ້ປົກຄອງຕາມກົດໝາຍ ຖ້າວ່າຜູ້ເຂົ້າຮ່ວມມີອາຍຸຕ່ຳກວ່າ 18 ປີ, ຕ້ອງການທີ່ຈະເຂົ້າຮ່ວມໃນໂຄງການໂດຍສານໃນຣົຖຕຳຫລວດ ໂດຍຜູ້ເຂົ້າຮ່ວມຮັບຜິດຊອບຕໍ່ຄວາມສ່ຽງທີ່ຈະເກີດຂຶ້ນເອງ ແລະຮັບຮູ້ວ່າມັນມີຄວາມເປັນໄປໄດ້ທີ່ຈະເກີດອັນຕະລາຍອັນເປັນຜົນມາຈາກການໂດຍສານໃນຣົຖຕຳຫລວດ; ແລະ

ດຽວນີ້, ເພາະສະນັ້ນ, ພາຍໃຕ້ການພິຈາລະນາເຖິງຄຸນຄ່າຂອງໂອກາດທາງການສຶກສາໃນການເຂົ້າຮ່ວມໃນໂຄງການໂດຍສານໃນຣົຖຕຳຫລວດ, ແລະການພິຈາລະນາທີ່ດີແລະມີຄຸນຄ່າອື່ນໆ, ຜູ້ເຂົ້າຮ່ວມທີ່ເຊັນຊື່ໃນທີ່ນີ້, ສຳລັບຕົວເອງ, ພັນລະຍາຂອງຕົນ, (ຫລືສາມີຂອງຕົນ), ຜູ້ສືບທອດ, ຜູ້ຈັດການມໍລະດົກ ຫລືຜູ້ບໍລິຫານ, ແລະຕົວແທນສ່ວນຕົວ; ຫລືພໍ່ແມ່ ຫລືຜູ້ປົກຄອງທີ່ເຊັນຊື່ໃນທີ່ນີ້ ໃນນາມຂອງຜູ້ເຂົ້າຮ່ວມທີ່ອາຍຸຕ່ຳກວ່າ 18 ປີ, ສະແດງໃນທີ່ນີ້ວ່າ:

(a) ຈະຮັບຜິດຊອບຢ່າງເຕັມສ່ວນສຳລັບການບາດເຈັບສ່ວນຕົວ ຫລືຄວາມເສັຽຫາຍໃດໆ ທີ່ຈະມີຕໍ່ຜູ້ເຂົ້າຮ່ວມ ຫລືຜູ້ເຂົ້າຮ່ວມທີ່ອາຍຸຍັງບໍ່ຮອດກະສຽນ, ຫລືຄວາມເສັຽຫາຍຕໍ່ຊັບສິນຂອງຜູ້ເຂົ້າຮ່ວມ, ຊຶ່ງອາດເກີດຂຶ້ນ, ທັງໂດຍກົງແລະໂດຍອ້ອມ, ໃນຂະນະທີ່ຢູ່ໃນ, ຢູ່ທີ່ຣົຖຂອງກົມຕຳຫລວດ, ສະຖານທີ່ຂອງກົມຕຳຫລວດ ຫລືສ່ວນໃດໆຂອງໂຮງການເມືອງມິນນີອາໂປລິສ ຫລືສານຂອງເຮັນນີພິນ ຄາວຕີ້, ຫລືໂຮງຕຳຫລວດໃດໆຂອງກົມຕຳຫລວດເມືອງມິນນີອາໂປລິສ, ຫລືໃນຂະນະໄປກັບເຈົ້າໜ້າທີ່ຕຳຫລວດຂອງເມືອງມິນນີອາໂປລິສໃນຂະນະທີ່ມີການປະຕິບັດໜ້າທີ່ຂອງຕຳຫລວດ;

(b) ເປັນອິດສະຫລະແລະປົດປ່ອຍຢ່າງເຕັມສ່ວນ ສຳລັບເມືອງມິນນີອາໂປລິສ, ຕົວແທນແລະພະນັກງານຂອງເມືອງ, ຈາກການທວງຄ່າ, ການຮຽກຮ້ອງ, ຄວາມເສັຽຫາຍ, ສິດໃນການກະທຳ, ຫລືສາເຫດຂອງການກະທຳ, ທັງໃນປັດຈຸບັນ ຫລືອະນາຄົດ, ບໍ່ວ່າຈະເປັນທີ່ຮູ້ຈັກ, ຄາດໝາຍ ຫລືບໍ່ຄາດໝາຍກໍ່ຕາມ, ຊຶ່ງເປັນຜົນມາຈາກ ຫລືເກີດຈາກການເຂົ້າຮ່ວມໃນໂຄງການໂດຍສານໃນຣົຖຕຳຫລວດ, ລວມເຖິງ, ແຕ່ບໍ່ຈຳກັດຢູ່ແຕ່, ຜູ້ເຂົ້າຮ່ວມ ຫລືຜູ້ເຂົ້າຮ່ວມທີ່ອາຍຸຍັງບໍ່ຮອດກະສຽນ, ຢູ່ໃນ ຫລືຢູ່ທີ່ຣົຖຂອງກົມຕຳຫລວດ, ຫລືຢູ່ທີ່ສ່ວນໃດສ່ວນໜຶ່ງ ຫລືທັງໝົດຂອງສະຖານທີ່ ຫລືສະຖານທີ່ອື່ນໆທີ່ໄດ້ກ່າວມາແລ້ວ, ຫລືໃນຂະນະໄປກັບເຈົ້າໜ້າທີ່ຕຳຫລວດໃດໆຂອງເມືອງມິນນີອາໂປລິສດັ່ງທີ່ໄດ້ກ່າວມາກ່ອນໜ້ານີ້ແລ້ວ;

(c) ຊົດໃຊ້ໃຫ້ ແລະປ້ອງກັນອັນຕະລາຍສຳລັບ ເມືອງມິນນີອາໂປລິສ, ຕົວແທນແລະພະນັກງານຂອງເມືອງ, ສຳລັບການກະທຳ ຫລືການດຳເນີນການໃດໆ ຂອງຜູ້ເຂົ້າຮ່ວມ ຫລືຜູ້ເຂົ້າຮ່ວມທີ່ຍັງບໍ່ຮອດກະສຽນ ບໍ່ວ່າຈະຢູ່ໃນລັກສະນະໃດກໍ່ຕາມ, ໃນຂະນະທີ່ຢູ່ໃນ, ຫລືຢູ່ທີ່ຣົຖຂອງກົມຕຳຫລວດ, ຫລືທີ່ສ່ວນໃດສ່ວນໜຶ່ງ ຫລືບໍລິເວນທັງໝົດຂອງສະຖານທີ່ດັ່ງທີ່ໄດ້ກ່າວມາແລ້ວ, ຫລືໃນຂະນະໄປກັບເຈົ້າໜ້າທີ່ຕຳຫລວດດັ່ງທີ່ໄດ້ກ່າວມາແລ້ວ;

(d) ເຫັນດີນຳທີ່ຈະປ້ອງກັນແລະຈ່າຍຄ່າຕ່າງໆ ຫລືຄ່າທະນາຄວາມໃນຖານະທີ່ເປັນຜົນມາຈາກການກະທຳໃດໆ ທີ່ຖືກນຳມາ ຫລືນຳໃຊ້ຕໍ່ຕ້ານກັບເມືອງມິນນີອາໂປລິສ, ຕົວແທນແລະພະນັກງານຂອງເມືອງ, ໃນຂະນະທີ່ຜູ້ເຂົ້າຮ່ວມ ຫລືຜູ້ເຂົ້າຮ່ວມທີ່ອາຍຸຍັງບໍ່ຮອດກະສຽນ ຢູ່ໃນ, ຫລືຢູ່ທີ່ຣົຖຂອງກົມຕຳຫລວດ, ຫລືທີ່ສ່ວນໃດສ່ວນໜຶ່ງ ຫລືສະຖານທີ່ທັງໝົດດັ່ງທີ່ໄດ້ກ່າວມາແລ້ວ, ຫລືໃນຂະນະໄປກັບເຈົ້າໜ້າທີ່ຕຳຫລວດດັ່ງທີ່ໄດ້ກ່າວມາແລ້ວ;

*(e)* ລະບຸວ່າ ໂດຍນັບແຕ່ວັນທີທີ່ເຊັນຊື່ໃສ່ໃນທີ່ນີ້, ຜູ້ເຂົ້າຮ່ວມແມ່ນມີອາຍຸສິບແປດ (18) ປີ ຫລືບຸກຄົນທີ່ເຊັນຊື່ໃນຂໍ້ຕົກລົງນີ້ໃນນາມຂອງຜູ້ເຂົ້າຮ່ວມທີ່ຍັງບໍ່ຮອດກະສຽນ ແມ່ນພໍ່ແມ່ ຫລືຜູ້ປົກຄອງຕາມກົດໝາຍຂອງເດັກທີ່ອາຍຸຍັງບໍ່ຮອດກະສຽນນັ້ນ;

(f) ເຫັນດີນຳວ່າ ມັນແມ່ນຄວາມຕັ້ງໃຈຂອງຜູ້ເຂົ້າຮ່ວມທີ່ເຊັນຊື່ໃນທີ່ນີ້, ຫລືພໍ່ແມ່ ຫລືຜູ້ປົກຄອງຕາມກົດໝາຍ, ວ່າຂໍ້ຕົກລົງວ່າດ້ວຍການປົດປ່ອຍແລະການຊົດເຊີຍຄ່າເສັຽຫາຍ ຈະມີຜົນບັງຄັບໃຊ້ຢ່າງເຕັມສ່ວນໃນເວລາໃດກໍຕາມ ຫລັງຈາກທີ່ໄດ້ມີການເຊັນຊື່ດຳເນີນການໃນທີ່ນັ້ນ.

*ຂໍ້ຕົກລົງວ່າດ້ວຍການປົດປ່ອຍແລະການຊົດເຊີຍຄ່າເສັຽຫາຍ ຊຶ່ງຈັດຕຽມໂດຍ ທະນາຍຄວາມປະຈຳເມືອງມິນນີອາໂປລິສ, ເດືອນກຸມພາ ປີ 1992*

(ຕໍ່ໜ້າຫລັງ)